ຫ້ອງການຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ)

# ການລົງທຶນ ໃນ ສປປ ລາວ



# ການລົງທຶນ ໃນ ສປປ ລາວ

ລັດຖະບານ ສປປ ລາວ ໄດ້ຮັບຮອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງ ເຊິ່ງມີຜົນບັງຄັບໃຊ້ ໃນວັນທີ 1 ຕຸລາ 2024. ກົດໝາຍໃໝ່ສະບັບນີ້ ໄດ້ປ່ຽນແທນກົດໝາຍປີ 2016 ແລະ ກົດໝາຍສະບັບປັບປຸງປີ 2019, ໂດຍມີການປັບປຸງຂອບນະໂຍບາຍສົ່ງເສີມການລົງທຶນ, ຂັ້ນຕອນການອະນຸມັດກິດຈະການລົງທຶນທົ່ວໄປ, ສໍາປະທານ, ເຂດເສດຖະກິດພິເສດ, ສະເພາະ (SEZs) ແລະ ການປົກປ້ອງນັກລົງທຶນ, ລວມທັງນິຄົມອຸດສາຫະກໍາ ແລະ ເຕັກໂນໂລຊີສູງ.

ພ້ອມດຽວກັນນັ້ນ, ລັດຖະບານໄດ້ສ້າງຕັ້ງ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຄລທ) ໃນວັນທີ 11 ສິງຫາ 2025 ເປັນອົງການຈັດຕັ້ງຂອງລັດຖະບານ, ຮັບຜິດຊອບ ແລະ ລາຍງານໂດຍກົງຕໍ່ ທ່ານ ນາຍົກລັດຖະມົນຕີ. ຫ້ອງການຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ) ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 18 ສິງຫາ 2025 ເຊິ່ງເປັນກົງຈັກການຈັດຕັ້ງໜຶ່ງມີຖານະເທົ່າກົມ, ເປັນໜ່ວຍງານຫຼັກໃນການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ປະສານສົມທົບກັບໜ່ວຍງານທີ່ກ່ຽວຂ້ອງ ໂດຍຜ່ານກົນ ໄກການບໍລິການລົງທຶນປະຕູດຽວ.

**ໂຄງຮ່າງການຈັດຕັ້ງ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ**



# ຂັ້ນຕອນການລົງທຶນ

ການບໍລິການລົງທຶນປະຕູດຽວ ອໍານວຍຄວາມສະດວກການຂໍອະນຸຍາດລົງທຶນ ເລີ່ມຕັ້ງແຕ່ການສອບຖາມຂໍ້ມູນເບື້ອງຕົ້ນຈົນເຖິງການເລີ່ມດໍາເນີນງານທຸລະກິດ. ຫລທ ຈະປະສານງານກັບຂະແໜງການພາກລັດ, ກວດຄວາມຖືກຕ້ອງຄໍາຮ້ອງຂໍລົງທຶນ, ສະໜັບສະໜູນການຈັດຕັ້ງປະຕິບັດໂຄງການຕາມພັນທະ ແລະ ຂໍ້ກໍານົດດ້ານລະບຽບການທັງໝົດ ພ້ອມທັງປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ.

## ກິດຈະການລົງທຶນທົ່ວໄປ

(1) ກິດຈະການທົ່ວໄປທີ່ບໍ່ຢູ່ໃນບັນຊີຄວບຄຸມ, ຜູ້ລົງທຶນສາມາດຍື່ນຄໍາຮ້ອງຈົດທະບຽນວິສາຫະກິດໂດຍກົງຕໍ່ຂະແໜງອຸດສາຫະກໍາ ແລະ ການຄ້າ. ຫຼັງຈາກນັ້ນ, ຍື່ນຄໍາຮ້ອງຂໍໃບອະນຸຍາດດໍາເນີນທຸລະກິດ ຕໍ່ຂະແໜງການທີ່ກ່ຽວຂ້ອງ.




(2) ກິດຈະການທົ່ວໄປ ທີ່ຢູ່ໃນບັນຊີຄວບຄຸມ, ຜູ້ລົງທຶນສາມາດຍື່ນຈົດທະບຽນວິສາຫະກິດ ຕໍ່ຂະແໜງອຸດສາຫະກໍາ ແລະ ການຄ້າ, ຫຼັງຈາກນັ້ນ ຍື່ນຄໍາຮ້ອງຂໍລົງທຶນ ຕໍ່ ຫ້ອງການຄະນະກໍາມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ) ທີ່ສູນກາງ ຫຼື ແຂວງ ຕາມການແບ່ງຂັ້ນຄຸ້ມຄອງ, ເຊິ່ງຈະເປັນຜູ້ທີ່ຈະປະສານງານກັບຂະແໜງການທີ່ກ່ຽວຂ້ອງເພື່ອຂໍຄໍາເຫັນ ໃນການອະນຸມັດໂຄງການ ແລະ ອອກໃບອະນຸຍາດລົງທຶນ.



## ກິດຈະການລົງທຶນສຳປະທານ

(1) ຜູ້ລົງທຶນສາມາດຍື່ນຄຳຮ້ອງຂໍລົງທຶນຕໍ່ ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ) ທີ່ສູນກາງ ຫຼື ແຂວງ ຕາມການແບ່ງຂັ້ນຄຸ້ມຄອງ, ເຊິ່ງ ຫລທ ຈະປະສານງານກັບຂະແໜງການທີ່ກ່ຽວຂ້ອງເພື່ອຂໍຄຳເຫັນ ແລະ ລາຍງານລັດຖະບານເພື່ອຂໍອະນຸມັດໂຄງການ. ຖ້າຄຳຮ້ອງຂໍລົງທຶນ ໄດ້ຮັບການອະນຸມັດ, ຂັ້ນຕອນຕໍ່ໄປລວມມີການເຈລະຈາ ແລະ ເຊັນ ບົດບັນທຶກຄວາມເຂົ້າໃຈ (MOU) ກັບ ຄລທ, ການເກັບກຳຂໍ້ມູນ, ສຶກສາຄວາມເປັນໄປໄດ້ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການ ແລະ ຂໍ້ກຳນົດອື່ນໆ. ເມື່ອຂັ້ນຕອນຕ່າງໆສຳເລັດແລ້ວ, ຫລທ ລາຍງານ ລັດຖະບານ ເພື່ອເຈລະຈາ ແລະ ເຊັນສັນຍາສຳປະທານ/ສັນຍາພັດທະນາໂຄງການ ແລະ ອອກໃບອະນຸຍາດການລົງທຶນ. ຈາກນັ້ນ, ຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນທຸລະກິດ ຕໍ່ຂະແໜງການທີ່ກ່ຽວຂ້ອງ.




## ນະໂຍບາຍສົ່ງເສີມການລົງທຶນ

ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (2024) ໄດ້ກຳນົດນະໂຍບາຍສົ່ງເສີມເພື່ອດຶງດູດການລົງທຶນ ທີ່ມີຄຸນນະພາບໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ ຕາມຂະແໜງການສົ່ງເສີມ ແລະ ຕາມເຂດ. ນະໂຍບາຍສົ່ງເສີມການລົງທຶນ ລວມມີ ນະໂຍບາຍດ້ານ ອາກອນກຳໄລ, ພາສີ, ອາກອນລາຍໄດ້, ອາກອນມູນຄ່າເພີ່ມ ແລະ ນະໂຍບາຍຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດ. ນະໂຍບາຍຊ່ວຍໜູນອື່ນໆ ເຊັ່ນ: ອຳນວຍຄວາມສະດວກໃນການຂໍບັດອະນຸຍາດພັກເຊົາ ແລະ ວີຊາທຸລະກິດ ເຂົ້າອອກຫຼາຍເທື່ອ ສຳລັບຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ, ນັກວິຊາການ, ແລະ ຜູ້ຊ່ຽວຊານຕ່າງປະເທດ.

# ກິດຈະການສົ່ງເສີມ ທີ່ໄດ້ຮັບ ນະໂຍບາຍສົ່ງເສີມ

1. ກະສິກຳສະອາດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາຫະກຳ, ການພັດທະນາປ່າໄມ້, ການປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນານາພັນ;

2. ອຸດສາຫະກຳ ປຸງແຕ່ງຜະລິດຕະພັນກະສິກຳ ແລະ ປຸງແຕ່ງຂະແໜງການອື່ນ ທີ່ເປັນມິດຕໍ່ສິ່ງແວດລ້ອມ, ການຜະລິດອາຫານສັດ, ຝຸ່ນທຳມະຊາດ, ຝຸ່ນຊີວະພາບ, ຝຸ່ນວິທະຍາສາດ ແລະ ປັດໄຈການຜະລິດກະສິກຳອື່ນ, ຫັດຖະກຳ ທີ່ເປັນມູນເຊື້ອເອກະລັກຂອງຊາດ, ຜະລິດຕະພັນໜຶ່ງເມືອງໜຶ່ງຜະລິດຕະພັນ, ການຜະລິດສິນຄ້າ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ;

3. ໂຮງໝໍ, ໂຮງງານຜະລິດຢາ ແລະ ອຸປະກອນການແພດ, ການຜະລິດ ແລະ ປິ່ນປົວດ້ວຍຢາພື້ນເມືອງ;

4. ການສຶກສາ, ການກິລາ-ກາຍຍະກຳ, ການພັດທະນາສີມືແຮງງານ ແລະ ການຜະລິດອຸປະກອນຮັບໃຊ້ການສຶກສາ ແລະ ກິລາ;

5. ການນຳໃຊ້ເຕັກໂນໂລຊີດີຈີຕອນ, ການຄົ້ນຄວ້າ ແລະ ການພັດທະນາວິທະຍາສາດ, ການນຳໃຊ້ນະວັດຕະກຳ ທີ່ເປັນມິດກັບສິ່ງແວດລ້ອມ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ;

6. ການພັດທະນາອຸດສາຫະກຳທ່ອງທ່ຽວທາງດ້ານ ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ;

7. ການລົງທຶນ, ການບໍລິການ ແລະ ການພັດທະນາໂຄງລ່າງພື້ນຖານສາທາລະນະປະໂຫຍດ ເປັນຕົ້ນ ການກໍ່ສ້າງທາງຫຼວງ ແລະ ທາງລົດໄຟ, ການສະໜອງນ້ຳ, ການບຳບັດນ້ຳເປື້ອນ, ການບໍລິຫານຈັດການສິ່ງເສດເຫຼືອ;

8. ການພັດທະນາລະບົບໂຄງລ່າງພື້ນຖານ ເພື່ອຮອງຮັບການລົງທຶນເຂົ້າໃນເຂດເສດຖະກິດພິເສດ ຫຼື ເຂດເສດຖະກິດສະເພາະ;

9. ການບໍລິການ ໂລຊິດສະຕິກ, ຂົນສົ່ງສິນຄ້າ, ລະບົບສາງສິນຄ້າຜ່ານແດນ ແລະ ທ່າບົກ, ການບໍລິການທາງຜ່ານ ແລະ ທາງເຊື່ອມໂຍງລະຫວ່າງປະເທດ, ການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ທາງບົກ, ທາງນ້ຳ, ທາງລົດໄຟ ແລະ ທາງອາກາດ.

## ຂັ້ນຕອນການຂໍນະໂຍບາຍສົ່ງເສີມການລົງທຶນ

ຜູ້ລົງທຶນທີ່ມີເງື່ອນໄຂໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ສາມາດຍື່ນຄຳຮ້ອງຂໍນະໂຍບາຍລົງທຶນ ຕໍ່ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ) ຂັ້ນສູນກາງ ແລະ ແຂວງ ຕາມການແບ່ງຂັ້ນຄຸ້ມຄອງ.

ຜູ້ລົງທຶນ

- ຜູ້ລົງທຶນທີ່ຂັ້ນສູນກາງອະນຸມັດການລົງທຶນ → ຍື່ນຄຳຮ້ອງຕໍ່ ຫລທ ສູນກາງ
- ຜູ້ລົງທຶນທີ່ຂັ້ນແຂວງອະນຸມັດການລົງທຶນ → ຍື່ນຄຳຮ້ອງທີ່ ຫລທ ຂັ້ນແຂວງ

## ສິດຂອງຜູ້ລົງທຶນ

ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະ ສິດສະເໝີພາບຂອງຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນ ການດຳເນີນທຸລະກິດຢ່າງຄ່ອງຕົວ ຕາມກົນໄກເສດຖະກິດຕະຫຼາດ, ຜົນປະໂຫຍດອັນຊອບທຳ, ສິດສະເໝີພາບ, ການນຳຊັບສິນ ແລະ ລາຍຮັບກັບຄືນປະເທດ. ການປົກປ້ອງ ເຫຼົ່ານີ້ສ້າງສະພາບແວດລ້ອມທີ່ໝັ້ນຄົງ ແລະ ຄາດເດົາໄດ້ສຳລັບການວາງແຜນທຸລະກິດໄລຍະຍາວ.

### ການປົກປ້ອງການລົງທຶນ

ການລົງທຶນທີ່ສອດຄ່ອງຕາມກົດໝາຍ ໄດ້ຮັບການປົກປ້ອງຢ່າງເຕັມສ່ວນພາຍໃຕ້ກົດໝາຍຂອງ ສປປ ລາວ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ໂດຍຮັບປະກັນບໍ່ໃຫ້ມີການຍຶດຊັບສິນມາເປັນຂອງລັດ ຫຼື ການຍຶດຊັບສິນ ໂດຍບໍ່ມີການດຳເນີນງານທີ່ເໝາະສົມ ຫຼື ການຊົດເຊີຍທີ່ຍຸດຕິທຳ. ການປົກປ້ອງນີ້ກວມເອົາຊັບສິນທາງທຸລະກິດ, ຊັບສິນທາງປັນຍາ ແລະ ສິດໃນການດຳເນີນງານ.

### ສິດໃນການຂະຫຍາຍການລົງທຶນ

ຜູ້ລົງທຶນມີສິດໃນການຂະຫຍາຍ, ດັດແປງ ຫຼື ປັບປຸງໂຄງການພາຍໃຕ້ຂັ້ນຕອນທີ່ໄດ້ຮັບການອະນຸມັດ, ຮັບປະກັນໂອກາດທາງການຕະຫຼາດ, ຂະຫຍາຍໄດ້ຢ່າງມີປະສິດທິພາບ ແລະ ຂັບເຄື່ອນການເຕີບໂຕທີ່ຍືນຍົງ.

### ການສົ່ງກຳໄລກັບຄືນປະເທດ

ຜູ້ລົງທຶນຕ່າງປະເທດສາມາດສົ່ງກຳໄລ ແລະ ທຶນກັບຄືນປະເທດ ໄດ້ຢ່າງສະດວກວ່ອງໄວ ໂດຍຜ່ານລະບົບທະນາຄານທຸລະກິດ ແລະ ມີການຢັ້ງຢືນຂອງທະນາຄານ ແຫ່ງ ສປປ ລາວ ພາຍຫຼັງສຳເລັດການປະຕິບັດພັນທະຕາມກົດໝາຍ. ລວມທັງລາຍໄດ້ ຈາກການດຳເນີນງານ, ລາຍຮັບຈາກການຂາຍຊັບສິນ, ແລະ ຕົ້ນທຶນ ແລະ ດອກເບ້ຍຈາກເງິນກູ້, ຮັບປະກັນຄວາມຍືດຫຍຸ່ນທາງດ້ານການເງິນ ແລະ ສະພາບຄ່ອງໃນການລົງທຶນສຳລັບຜູ້ຖືຫຸ້ນຕ່າງປະເທດ.

## ການປະຕິບັດຕາມກົດໝາຍ

ຜູ້ລົງທຶນໃນ ສ.ປ.ປ. ລາວ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ, ຮັບປະກັນການດຳເນີນງານທີ່ມີຄວາມຮັບຜິດຊອບ ແລະ ຍືນຍົງ ເຊິ່ງເປັນປະໂຫຍດຕໍ່ທັງທຸລະກິດ ແລະ ຊຸມຊົນ. ພັນທະທີ່ສຳຄັນລວມມີ:

**ພັນທະດ້ານອາກອນ**

ການຈ່າຍອາກອນກຳໄລ, ອາກອນລາຍໄດ້, ອາກອນມູນຄ່າເພີ່ມ ແລະ ອາກອນອື່ນໆ ທີ່ກ່ຽວຂ້ອງຕາມກຳນົດເວລາ, ລວມທັງການມອບເງິນຄ້ຳປະກັນໂຄງການຕາມກຳນົດເວລາ.

**ລະບຽບການດ້ານພາສີ**

ການແຈ້ງ ແລະ ປະກອບເອກະສານທີ່ຖືກຕ້ອງສຳລັບການນຳເຂົ້າ ແລະ ສົ່ງອອກ, ມີການເກັບຮັກສາບັນທຶກທີ່ຖືກຕ້ອງເພື່ອການກວດສອບ.

**ພັນທະດ້ານສັງຄົມ**

ການປະຕິບັດການຈ້າງງານທີ່ເປັນທຳ, ການປະຕິບັດຕາມຂໍ້ກຳນົດກ່ຽວກັບຄ່າແຮງງານຂັ້ນຕ່ຳ, ມາດຕະຖານຄວາມປອດໄພຂອງຜູ້ອອກແຮງງານ ແລະ ການປະກອບສ່ວນດ້ານປະກັນສັງຄົມ, ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ, ເຄົາລົບຮີດຄອງປະເພນີ ແລະ ສົ່ງເສີມທຸລະກິດພາຍໃນ.

**ການປົກປ້ອງສິ່ງແວດລ້ອມ**

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ມາດຕະການຄວບຄຸມມົນລະພິດ, ແລະ ການຄຸ້ມຄອງຊັບພະຍາກອນແບບຍືນຍົງຕາມແຜນການຄຸ້ມຄອງສິ່ງແວດລ້ອມທີ່ໄດ້ຮັບການອະນຸມັດ.

**ການນຳໃຊ້ທີ່ດິນ**

ການນຳໃຊ້ທີ່ດິນຕາມຈຸດປະສົງໄດ້ຮັບການອະນຸມັດ, ປະຕິບັດພັນທະໃນການຈ່າຍຄ່າເຊົ່າສຳປະທານ, ແລະ ລະບຽບການແບ່ງເຂດ.

**ບົດລາຍງານ**

ສົ່ງບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ໃຫ້ ຫລທ ແລະ ຂະແໜງການທີ່ກ່ຽວຂ້ອງຕາມກຳນົດເວລາ.

ຫ້ອງການຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ)


**ຂໍ້ມູນເພີ່ມເຕີມ, ຕິດຕໍ່**

**ຫ້ອງການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ (ຫລທ)**
ບ້ານໂພນທັນ, ເມືອງໄຊເສດຖາ,
ສຳນັກງານ ນະຄອນຫຼວງວຽງຈັນ ໂທ: +856 21 419337
ເວັບໄຊທ໌: https://investlaos.gov.la/



ແຜ່ນພັບນີ້ໄດ້ຖືກພັດທະນາຂຶ້ນພາຍໃຕ້ ໂຄງການ *the Laos–Australia Investment Facilitation and Transformation for Economic Resilience (LIFT 4 Laos),* ຈັດຕັ້ງປະຕິບັດໂດຍ ຄະນະກຳມາທິການເສດຖະກິດ ແລະ ສັງຄົມຂອງສະຫະປະຊາຊາດສຳລັບອາຊີ ແລະ ປາຊີຟິກ *(ESCAP)* ໂດຍການໃຫ້ທຶນຂອງ ລັດຖະບານອົດສະຕຣາລີ ຜ່ານການຮ່ວມມື ແມ່ນ້ຳຂອງ-ອົດສະຕຣາລີ *(MAP).*